

# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ ........................................... 1

II. ການເຄື່ອນໄຫວວຽກງານ ຄະນະນຳ ຄຕພ........................................................................ 4


**ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ**

**ປະຈຳເດືອນ ເມສາ 2024**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງໃນພາກພື້ນ ແລະ ສາກົນ

## 1. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 2 ເມສາ 2024, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ ກອມມູນິດຫວຽດນາມ ໄດ້ພົບປະກັບ ປະທານພັກເສລີປະຊາທິປະໄຕ ແລະ ນາຍົກລັດຖະມົນຕີຍີ່ປຸ່ນ, ປະທານສະພາຕໍ່າ ແລະ ປະທານສະພາສູງ ທີ່ນະຄອນໂຕກຽວ. ສອງຝ່າຍເຫັນດີສືບຕໍ່ເພີ່ມທະວີຄວາມຮ່ວມມືດ້ານການເມືອງ, ການຢ້ຽມຢາມຂອງການນໍາທຸກຂັ້ນ, ເສດຖະກິດ-ການຄ້າ ການລົງທຶນ ແລະ ອື່ນໆ. ຍີ່ປຸ່ນ ຈະຊ່ວຍ ຫວຽດນາມ ໃນບັນດາໂຄງການພັດທະນາສີຂຽວ, ຫັນເປັນດິຈິຕອນ ແລະ ການປ່ຽນແປງຂອງດິນຟ້າອາກາດ, ຊຸກຍູ້ຫວຽດນາມ ເຂົ້າເຖິງ ODA ໃຫ້ຫຼາຍຂຶ້ນ.

ວັນທີ 22/4/2024, ຄະນະເລຂາທິການສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບ ແລະ ຜັນຂະຫຍາຍປະຕິບັດຄໍາສັ່ງເລກທີ 32-CT/TW ຂອງກົມ ກ່ຽວກັບ ການເພີ່ມທະວີການນໍາພາຂອງພັກ ໃນວຽກງານຕ້ານການຂຸດຄົ້ນປະມົງທີ່ຜິດກົດໝາຍ, ບໍ່ມີລາຍງານ, ບໍ່ມີລະບຽບ ແລະ ການພັດທະນາອຸດສາຫະກໍາການປະມົງຍືນຍົງ ຢູ່ຮ່າໂນ້ຍ, ມີຜູ້ແທນ 28 ແຂວງທີ່ມີຊາຍແດນຕິດແຄມທະເລ ແລະ ອົງການທີ່ກ່ຽວຂ້ອງເຂົ້າຮ່ວມ. ສະຫາຍ ນາງ ເຈືອງທິມາຍ, ກໍາມະການກົມການເມືອງ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ໄດ້ກ່າວບາງຕອນວ່າ: ຕ້ອງເອົາໃຈໃສ່ ແລະ ກໍ່ສ້າງໂຄງປະກອບການປະມົງຄືນໃໝ່ໃຫ້ມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ຍືນຍົງ; ເອົາໃຈໃສ່ສ້າງ ແລະ ປັບປຸງຊີວິດການເປັນຢູ່ຂອງຊາວປະມົງ ແລະ ຄົນງານທີ່ກ່ຽວຂ້ອງໃຫ້ດີຂຶ້ນ; ພ້ອມກັນນັ້ນຕ້ອງມີນະໂຍບາຍປົກປັກຮັກສາ ແລະ ພັດທະນາຊັບພະຍາກອນນໍ້າໃນໄລຍະຍາວໃຫ້ສອດຄ່ອງ ທາງກົດໝາຍຂອງລັດເປັນຢ່າງດີ; ກວດກາເປັນປະຈໍາ ແລະ ເຕືອນບຸກຄະລາກອນ ແລະ ໜ່ວຍງານທີ່ຍັງບໍ່ທັນໄດ້ປະຕິບັດຕາມຢ່າງເຂັ້ມງວດ.

### 2) ພັກກອມມູນິດຈີນ

ວັນທີ 29 ມີນາ 2024, ກໍາມະການກົມການເມືອງສູນກາງພັກກອມມູນິດຈີນເປີດກອງປະຊຸມ ເພື່ອພິຈາລະນາ "ບົດລາຍງານສັງລວມກ່ຽວກັບສະພາບການສໍາຫຼວດກວດກາຮອບທີ 2 ຂອງຄະນະກໍາມະການສູນກາງພັກກອມມູນິດຈີນຊຸດທີ 20". ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່ຄະນະກາມະການສູນກາງພັກກອມມູນິດຈີນ ໄດ້ເນັ້ນໜັກໃຫ້ທີ່ປະຊຸມ ຖືເອົາການສໍາຫຼວດກວດກາ ແລະ ການປັບປຸງວຽກງານເປັນວິທີຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ ແລະ ການຄຸ້ມຄອງບໍລິຫານພັກຢ່າງເຂັ້ມແຂງຮອບດ້ານ, ເພີ່ມທະວີການຕິດຕາມກວດກາການແກ້ໄຂ ທຸກວຽກງານດ້ວຍຄວາມຮັບຜິດຊອບ. ພ້ອມນີ້, ວາລະສານ "ສິວຊື" ສະບັບທີ 7 ໄດ້ພິມບົດຄວາມຂອງ ສະຫາຍ ສີຈິ້ນຜິງ ທີ່ມີຫົວຂໍ້ວ່າ "ຕ້ອງຍຶດໝັ້ນປະຊາຊົນຢູ່ເໜືອທຸກສິ່ງທຸກຢ່າງ", ປະຊາຊົນເປັນຜູ້ສ້າງປະຫວັດສາດ, ປະຊາຊົນເປັນວິລະຊົນທີ່ແທ້ຈິງ, ຫຼັກໝັ້ນປະຊາຊົນແມ່ນຫຼັກໝັ້ນການເມືອງພື້ນຖານຂອງພັກກອມມູນິດຈີນ ແລະ ເປັນຂີດໝາຍອັນພົ້ນເດັ່ນຂອງພັກການເມືອງລັດທິມາກ ທີ່ຕ່າງກັບພັກການເມືອງອື່ນໆ. ນອກຈາກຜົນປະໂຫຍດຂອງປະຊາຊົນແລ້ວ, ພັກ ຈະບໍ່ມີຜົນປະໂຫຍດພິເສດຂອງຕົນ, ງານທຸກປະການຂອງພັກລ້ວນແຕ່ເພື່ອສ້າງ, ປົກປ້ອງ ແລະ ເພີ່ມພູນຜົນປະໂຫຍດພື້ນຖານຂອງປະຊາຊົນ.

ວັນທີ 2 ເມສາ 2024, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່, ປະທານປະເທດຈີນ ໄດ້ສົນທະນາທາງໂທລະສັບກັບທ່ານ ໂຈໄບເດັນ, ປະທານາທິບໍດີອາເມລິກາ. ສະຫາຍ ສີ ຈິ້ນຜິງ ໄດ້ກ່າວເນັ້ນວ່າ: ບັນຫາໄຕ້ຫວັນ ເປັນບັນຫາສໍາຄັນກະທົບຕໍ່ການພົວພັນ ແລະ ຈະບໍ່ຍອມໃຫ້ພາຍນອກ ມາຍຸແຍ່ແບ່ງແຍກດິນແດນຂອງຈີນ. ທ່ານ ໄບເດັນ ກ່າວວ່າ ອາເມລິກາບໍ່ສະແຫວງຫາການດໍາເນີນ "ສົງຄາມເຢັນຄັ້ງໃໝ່", ບໍ່ສະແຫວງຫາການປ່ຽນແປງລະບອບການເມືອງຂອງຈີນ, ອາເມລິກາບໍ່ໄດ້ສະແຫວງຫາການຄວບຄຸມການພັດທະນາຂອງຈີນ ຫຼື ການແບ່ງແຍກຈີນ. ນອກນີ້, ເຈົ້າໜ້າທີ່ລະດັບສູງຂອງອາເມລິກາ ໄດ້ຢ້ຽມຢາມຈີນ ສອງຝ່າຍ ໄດ້ເປັນເອກະພາບດ້ານຫຼັກການ 5 ຂໍ້ : ① ສືບຕໍ່ປະຕິບັດຕາມທິດຊີ້ນໍາຂອງປະມຸກລັດສອງປະເທດພົບປະກັນ ທີ່ນະຄອນຊານຟຣານຊິສໂກ ເດືອນ ພະຈິກ 2023 ເປັນຕົ້ນມາ ການຊຸກຍູ້ສາຍພົວພັນ ໃຫ້ໄດ້ຮັບການພັດທະນາ ແລະ ມີຄວາມໝັ້ນຄົງ; ② ຮັກສາການໄປມາຫາສູ່ກັນລະຫວ່າງ ການນໍາຂັ້ນສູງ ແລະ ການພົບປະກັນລະຫວ່າງຂັ້ນຕ່າງໆ ເປັນຕົ້ນ: ດ້ານການຕ້ານຢາເສບຕິດ, ການປ່ຽນແປງຂອງດິນຟ້າອາກາດ ແລະ ປັນຍາປະດິດ; ③ ຈະຈັດກອງປະຊຸມປຶກສາຫາລືກ່ຽວກັບປັນຍາປະດິດຂັ້ນລັດຖະບານ; ວຽກງານອາຊີປາຊີຟິກ ແລະ ວຽກງານທະເລ; ວຽກ

ງານກົງສຸນ; ④ ເປີດກວ້າງການແລກປ່ຽນດ້ານວັດທະນະທຳ, ການສຶກສາການທ່ອງທ່ຽວ; ⑤ ປຶກສາຫາລື ກ່ຽວກັບບັນຫາໃນພາກພື້ນ ແລະ ສາກົນ.

**3) ພັກແຮງງານ ສປປ.ເກົາຫຼີ**

ວັນທີ 3 ເມສາ 2024, ສປປ.ເກົາຫຼີ ໄດ້ທົດລອງຍິງລູກສອນໄຟ hypersonic ໄລຍະກາງຫາໄລຍະໄກໃຫມ່ ທີ່ມີຊື່ວ່າ "Hwasongpo-16na", ຊຶ່ງຍິງໄປໃນທິດຕາເວັນອອກສຽງເໜືອຈາກສະໜາມຝຶກຊ້ອມການທະຫານຢູ່ເຂດຊານເມືອງນະຄອນຫຼວງພຽງຢາງ ຍິງໄດ້ລະດັບສູງທຳອິດ 101,1 ກິໂລແມັດ ແລະ ລະດັບຄວາມສູງທີສອງແມ່ນ 72,3 ກິໂລແມັດ ຕາມເສັ້ນທາງການບິນທີ່ກຳນົດໄວ້ ແລະ ບໍ່ໄດ້ສົ່ງຜົນກະທົບຕໍ່ຄວາມປອດໄພຂອງປະເທດເພື່ອນບ້ານ. ໃນໂອກາດດັ່ງກ່າວ, ສະຫາຍ ກິມເຈິງອຸນ, ຜູ້ນຳສູງສຸດ ສປປ ໄດ້ຕີລາຄາສູງການປະຕິບັດໜ້າທີ່ຂອງບັນດາເຈົ້າໜ້າທີ່, ນັກວິທະຍາສາດ, ວິສະວະກອນ ໃນຂະແໜງວິທະຍາສາດປ້ອງກັນປະເທດ ທີ່ປະສົບຜົນເລັດຢ່າງຈົບງາມ, ສາມາດຄວບຄຸມ ແລະ ສ້າງອາວຸດນິວເຄຼຍ, ດ້ວຍການປະຕິບັດ 3 ຫຼັກການ ສຳຄັນຂອງການກໍ່ສ້າງກຳລັງລູກສອນໄຟຂອງສູນກາງພັກແມ່ນ "ໄວ, ຖືກຕ້ອງ ແລະ ມີພະລັງ" ນີ້ແມ່ນໝາກຜົນອັນສູງສົ່ງຂອງພາລະກິດຄົ້ນຄວ້າວິທະຍາສາດປ້ອງກັນປະເທດມາເປັນເວລາເກືອບ 10 ປີ; ສອດຄ່ອງກັບນະໂຍບາຍກໍ່ສ້າງກຳລັງປ້ອງກັນປະເທດຂອງພັກ ເພື່ອຕ້ານໄພຂົ່ມຂູ່ ແລະ ໃນວັນທີ 26/4/2024, ສະຫາຍ ກິມ ໄດ້ເຂົ້າຮ່ວມພິທີສະເຫຼີມສະຫຼອງ ຄົບຮອບ 92 ປີ ແຫ່ງການສ້າງຕັ້ງ ກອງທັບປະຕິວັດປະຊາຊົນເກົາຫຼີ ທີ່ມະຫາວິທະຍາໄລ ກິມອິນຊຸງ, ນະຄອນຫຼວງພຽງຢາງ. ສະຫາຍ ກິມ ໄດ້ກ່າວວ່າ ນອກຈາກສົ່ງເສີມທັກສະດ້ານການສູ້ຮົບຍຸດທະວິທີແລ້ວ ຂໍໃຫ້ສືບຕໍ່ສ້າງບຸກຄະລາກອນ ລະດັບຜູ້ບັນຊາການທະຫານ ທີ່ມີຄວາມສາມາດ ແລະ ການສົ່ງເສີມການພັດທະນາຂີດຄວາມສາມາດຂອງ ລະດັບຜູ້ບັນຊາການທະຫານ ໃຫ້ສູງຂຶ້ນ.

**4) ພັກກອມມູນິດກູບາ**

ໃນວັນທີ 30 ມີນາ 2024, ທ່ານ Miguel Díaz-Canel, ເລຂາທິການທີໜຶ່ງ ຄະນະບໍລິຫານງານສູນກາງພັກກອມມູນິດກູບາ, ປະທານປະເທດ ແຫ່ງ ສ.ກູບາ ໄດ້ຕ້ອນຮັບການຢ້ຽມຢາມ ສ. ກູບາ ຢ່າງເປັນທາງການ ຂອງທ່ານ ນ. Gleisi Hoffmann, ປະທານພັກແຮງງານ ບຣາຊິນ. ທ່ານ Miguel Díaz-Canel ໄດ້ຍົກໃຫ້ເຫັນເຖິງສະພາບຄວາມຫຍຸ້ງຍາກ ທີ່ ກູບາ ກຳລັງປະເຊີນຢູ່ ຈາກການປິດລ້ອມຂອງ ອາເມຣິກາ ແລະ ການລວມເອົາກູບາ ເຂົ້າໃນບັນຊີລາຍຊື່ປະເທດສະໜັບສະໜູນການ ກໍ່ການຮ້າຍສາກົນ ແລະ ສະແດງຄວາມຂອບໃຈ ຕໍ່ການສະໜັບສະໜູນຢ່າງຕໍ່ເນື່ອງ ຂອງ ທ່ານ Luiz Inácio Lula da Silva, ປະທານາທິບໍດີບຣາຊິນ ໃນເວລາທີ່ກູບາປະເຊີນໜ້າ ກັບ ຄວາມຫຍຸ້ງຍາກ. ການຢ້ຽມຢາມຄັ້ງນີ້, ສອງຝ່າຍ ໄດ້ລົງນາມຂໍ້ຕົກລົງ ກ່ຽວກັບ ການແລກປ່ຽນ ແລະ ການຮ່ວມມືລະຫວ່າງ ພັກກອມມູນິດກູບາ ແລະ ພັກແຮງງານບຣາຊິນ, ເພື່ອໃຫ້ກູບາ ແລະ ບຣາຊິນ ຊຸກຍູ້ການແລກປ່ຽນຄະນະຜູ້ແທນໃຫ້ຫຼາຍຂຶ້ນໃນແຕ່ລະປີ ກ້າວໄປສູ່ກອງປະຊຸມທາງດ້ານທິດສະດີ ແລະ ພຶດທິກຳ. ທ່ານ ນ. Gleisi Hoffmann ສະແດງຄວາມຂອບໃຈຄວາມສາມັກຄີຂອງປະຊາຊົນ ກູບາ ຕໍ່ ທ່ານ Luiz Inácio Lula da Silva ໃນເວລາຖືກກັກຂັງ (ຈຳຄຸກ) ປີ 2019 ໂດຍການສົ່ງລາຍເຊັນຂອງປະຊາຊົນກູບາ 02 ລ້ານກວ່າລາຍເຊັນ ເພື່ອຮຽກຮ້ອງໃຫ້ປ່ອຍໂຕ ທ່ານ Luiz Inácio Lula da Silva ແລະ ຢືນຢັນ ຈະສືບຕໍ່ສະໜັບສະໜູນຕໍ່ສູ້ເພື່ອທວງໃຫ້ອາເມຣິກາຍົກເລີກການປິດລ້ອມກູບາຢ່າງຖາວອນ.

**5) ການເລືອກຕັ້ງທ້ອງຖິ່ນ ຕວັກກີ**

ໃນວັນທີ 31 ມີນາ 2024, ສາທາລະນະລັດຕວັກກີ ໄດ້ຈັດການເລືອກຕັ້ງທ້ອງຖິ່ນ ເພື່ອເລືອກເອົາ ສະມາຊິກລັດຖະສະພາໃນຈຳນວນ 15 ເມືອງໃຫຍ່ ທົ່ວປະເທດ ລວມທັງນະຄອນຫຼວງອິດສະຕັດບູ ແລະ ບັງກາຣາ. ຜົນການເລືອກຕັ້ງແມ່ນ ພັກສາທາລະນະລັດ ປະຊາຊົນ ຫລື CHP, ຊຶ່ງເປັນພັກຝ່າຍຄ້ານ ສາມາດຍາດໄດ້ 50,1% ເພີ່ມຂຶ້ນ 20.29% ຖ້າທຽບໃສ່ການເລືອກຕັ້ງທ້ອງຖິ່ນປີ 2019 ຜ່ານມາ, ໃນຂະນະທີ່ ພັກຍຸດຕິທຳ ແລະ ພັດທະນາ (AKP) ຂອງທ່ານ Erdogan, ປະທານາທິບໍດີ ຄົນປັດຈຸບັນ ສາມາດຍາດໄດ້ພຽງ 42,1% ຫຼຸດລົງ 0.45%. ຜ່ານມາ ເມືອງໃຫຍ່ທັງສອງນີ້ ແມ່ນເຄີຍຕົກເປັນຖານສຽງຂອງພັກ (AKP) ຂອງທ່ານ Erdogan ຕະຫລອດ 20 ປີຜ່ານມາ ແລະ ສຳລັບຄັ້ງນີ້ ເປັນເຫດການຄັ້ງປະຫວັດສາດທີ່ພັກ (AKP) ໄດ້ເສຍຖານສຽງສຳຄັນ. ຢ່າງໃດກໍ່ຕາມ, ທ່ານ Erdogan, ປະທານພັກ AKP, ໄດ້ອອກມາຍອມຮັບຜົນການເລືອກຕັ້ງ ແລະ ພ້ອມຈະປັບປຸງການບໍລິຫານຂອງຕົນເອງຄືນໃໝ່,

ເພື່ອການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນປີ 2028. ນັກວິເຄາະ ໃຫ້ທັດສະນະວ່າ: ສາເຫດຫລັກ ທີ່ ພັກ AKP ສູນເສຍຖານການເລືອກຕັ້ງທ້ອງຖິ່ນ ແມ່ນມາຈາກຄະນະລັດຖະບານບໍ່ສາມາດແກ້ໄຂບັນຫາສະພາບເສດຖະກິດໄດ້ ແລະ ປະຊາຊົນຊາວມຸດສະລິມສ່ວນໃຫຍ່ແມ່ນບໍ່ພໍໃຈ ຕໍ່ແນວທາງຂອງລັດຖະບານ ທີ່ບໍ່ສາມາດປະສານໃຫ້ການແກ້ໄຂບັນຫາຄວາມຂັດແຍ່ງລະຫວ່າງກຸ່ມຮາມາດ ແລະ ອິດສະຣາແອນໃນເຂດກາຊາໄດ້.

## 2. ຂ່າວພົ້ນເດັ່ນໃນພາກພື້ນ ແລະ ສາກົນ

### 1) ສະພາບການໃນພາກພື້ນອາຊີ-ປາຊີຟິກ

ພາຍຫຼັງ ທ່ານ Prabowo Subianto, ຫົວໜ້າພັກແນວຮ່ວມອິນໂດເນເຊຍ ຊະນະການເລືອກຕັ້ງ ປະທານາທິບໍດີ ໃນວັນທີ 14 ກຸມພາ 2024 ຜ່ານມາ, ໄດ້ຢ້ຽມຢາມ ສປ.ຈີນ ເປັນປະເທດທຳອິດ ໃນວັນທີ 1 ເມສາ 2024. ສປ.ຈີນ ແລະ ສ.ອິນໂດເນເຊຍ, ເຫັນດີ ຈະລິ້ງເລີກການຮ່ວມມືຍຸດທະສາດຮອບດ້ານ, ຈະເຮັດວຽກຮ່ວມກັນເພື່ອສ້າງປະຊາຄົມ ຈີນ-ອິນໂດເນເຊຍ ທີ່ມີຊະຕາກຳຮ່ວມກັນ; ເຊີດຊູການພົວພັນ ຈີນ-ອິນໂດເນເຊຍ, ຍຶດໝັ້ນຄວາມເປັນເອກະລາດຂອງທັງສອງປະເທດ, ຄວາມໄວ້ວາງໃຈ ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ຮັດແໜ້ນຄວາມສາມັກຄີ ແລະ ຮັກສາຄວາມເປັນແກນກາງຂອງອາຊຽນ; ຈະສະໜັບສະໜູນການພັດທະນາທີ່ໃກ້ຊິດຂອງສອງປະເທດ, ສະໜັບສະໜູນນະໂຍບາຍຈີນດຽວ; ຊຸກຍູ້ການຮ່ວມມືກັນໃນວຽກງານພາກພື້ນ ແລະ ສາກົນ.

ວັນທີ 11/4/2024, ຜູ້ນຳອາເມຣິກາ, ຍີ່ປຸ່ນ ແລະ ຟີລິບປິນ ໄດ້ຈັດກອງປະຊຸມຮ່ວມກັນຄັ້ງທຳອິດ ຢູ່ອາເມຣິກາ ຊຶ່ງໄດ້ອອກຖະແຫຼງການຈະເພີ່ມທະວີຄວາມຮ່ວມມືວຽກງານປ້ອງກັນປະເທດ, ຄວາມໝັ້ນຄົງຂອງພາກພື້ນອາຊີ-ປາຊີຟິກ; ພ້ອມນັ້ນ,ໄດ້ກ່າວວ່າ ຈີນປ່ຽນແປງສະຖານະໃນທະເລຈີນໃຕ້ ພຽງຝ່າຍດຽວ ຊຶ່ງ ສປ.ຈີນ ໄດ້ຕອບໂຕ້ວ່າ ກອງປະຊຸມ 3 ຝ່າຍດັ່ງກ່າວເປັນຄວາມຕັ້ງໃຈສ້າງຄວາມວຸ້ນວາຍໃນທະເລຈີນໃຕ້. ຈີນຈະປົກປ້ອງອະທິປະໄຕຜືນແຜ່ນດິນ, ສິດ ແລະ ຜົນປະໂຫຍດທາງທະເລຂອງຕົນຢ່າງເດັດດ່ຽວ, ຍຶດໝັ້ນໃນເວທີການສົນທະນາ ແລະ ປຶກສາຫາລືກັບປະເທດທີ່ກ່ຽວຂ້ອງໃນບັນຫາກ່ຽວກັບທະເລລະຫວ່າງສອງຝ່າຍນັ້ນໂດຍກົງ; ຄັດຄ້ານທຸກການແຊກແຊງຈາກພາຍນອກ ທີ່ຫວັງສ້າງສະຖານະການໃຫ້ຮຸນແຮງຂຶ້ນ. ພ້ອມກັນນີ້ ສປ.ຈີນ ໄດ້ອອກຖະແຫຼງການປະນາມ ການຊ້ອມຮົບລະຫວ່າງ ອາເມລິກາ ແລະ ຟີລິບປິນ, ທີ່ຈັດຂຶ້ນແຕ່ ວັນທີ 22/4-10/5/2024 ເປັນການແຊກແຊງຄວາມໝັ້ນຄົງໃນພາກພື້ນ.

### 2) ສະພາບປັ່ນປ່ວນຂໍ້ຂັດແຍ່ງອູແກຣນ-ລັດເຊຍ

ຄວາມຂັດແຍ່ງລະຫວ່າງອູແກຣນ-ລັດເຊຍ ຍັງເຄັ່ງຕຶງ ເນື່ອງຈາກບັນດາປະເທດຕາເວັນຕົກ ສືບຕໍ່ສະໜອງຍຸດໂທປະກອນຊ່ວຍອູແກຣນ ຢ່າງຕໍ່ເນື່ອງ. ລັດເຊຍ ໄດ້ໂຈມຕີທາງອາກາດໃສ່ເປົ້າໝາຍຫຼາຍແຫ່ງໃນເມືອງຄາຄິບ ທາງພາກຕາເວັນອອກສ່ຽງເໜືອ ແລະ ບັນດາໂຄງສ້າງພື້ນຖານໃນເມືອງໂອເດຊາທາງພາກໃຕ້ຂອງອູແກຣນ, ໂຈມຕີໂຄງສ້າງພື້ນຖານດ້ານພະລັງງານ ແລະ ຫຼາຍທີ່ໝັ້ນທາງການທະຫານຂອງອູແກຣນ ລວມທັງສະຖານທີ່ການຜະລິດ ແລະ ການສ້ອມແປງອາວຸດຫຼາຍແຫ່ງ ເປັນຕົ້ນແມ່ນ ໂຮງງານໄຟຟ້າ, ສະຖານີໂທລະພາບ, ທາງລົດໄຟ ແລະ ໂຮງງານຜະລິດກາສທຳມະຊາດ. ສ່ວນອູແກຣນ ໄດ້ຂໍການຊ່ວຍເຫຼືອຈາກບັນດາປະເທດຕາເວັນຕົກ, ໃນນັ້ນໄດ້ຂໍລະບົບປ້ອງກັນໄພທາງອາກາດ ລຸ້ນ patriote ຈຳນວນ 7 ຊຸດຈາກ ອາເມຣິກາ, ສ່ວນອັງກິດ ໄດ້ປະກາດ ໃຫ້ການຊ່ວຍເຫຼືອ ອູແກຣນ ມູນຄ່າ 500 ລ້ານປອນ (617 ລ້ານໂດລາ). ຂະນະທີ່ດານມາກ ຈະຈັດສັນງົບປະມານ 295 ລ້ານປອນ ເພື່ອພັດທະນາອຸດສາຫະກຳທາງທະຫານໃຫ້ແກ່ ອູແກຣນ ລວມທັງການຜະລິດ Drone ແລະ ຂີປະນາວຸດ. ໂປໂລຍ ໄດ້ຮຽກຮ້ອງໃຫ້ກຸ່ມ NATO ໄປຕິດຕັ້ງຂີປະນາວຸດໃນດິນແດນຂອງຕົນ ເພື່ອປ້ອງກັນການໂຈມຕີຈາກລັດເຊຍ. ນອກຈາກນັ້ນ, ບັນດາປະເທດ NATO ໄດ້ປະຊຸມລັດຖະມົນຕີຕ່າງປະເທດ ໃນວັນທີ 4 ເມສາ 2024, ທີ່ນະຄອນ Brussel ຂອງແບນຊິກ ໄດ້ປຶກສາຫາລືກ່ຽວກັບຄວາມເປັນໄປໄດ້ໃນການໃຫ້ເງິນຊ່ວຍເຫຼືອອູແກຣນ 100 ຕື້ເອີໂຣ ໃນໄລຍະ 5 ປີ ແລະ ວັນທີ 30 ເມສາ 2024, ສະພາສູງ ອາເມລິກາ ໄດ້ຜ່ານງົບປະມານ 95 ຕື້ໂດລາສະຫະລັດ, ໃນນັ້ນ 61 ຕື້ ຈະຊ່ວຍອູແກຣນ, 26 ຕື້ ຊ່ວຍອິດສະຣາແອນ ແລະ 8 ຕື້ ຊ່ວຍໄຕ້ຫວັນ, ການຊ່ວຍເຫຼືອຂອງອາເມລິກາ ແລະ ພັນທະມິດ ແກ່ອູແກຣນ ນັບແຕ່ລັດເຊຍປະຕິບັດການພິເສດ ລວມທັງໝົດມີ 175 ຕື້ໂດລາສະຫະລັດ.

ທ່ານ ດິມິຕຣີ ເປັສຄອບ, ໂຄສົກປະຈຳສຳນັກງານປະທານາທິບໍດີລັດເຊຍ ໄດ້ຖະແຫຼງວ່າ ການຊ່ວຍເຫຼືອອາວຸດໃຫ້ແກ່ ອູແກຣນ ຈະບໍ່ສາມາດປ່ຽນແປງສະຖານະການໃນການສູ້ຮົບທີ່ກຳລັງດຳເນີນຢູ່ໃນເວລານີ້ ຍິ່ງຈະເຮັດໃຫ້ອູແກ

ຣົມສູນເສຍທະຫານຈຳນວນຫຼາຍ ແລະ ມີໜີ້ສິນຫຼາຍຂຶ້ນ, ລັດເຊຍ ຈະດຳເນີນການຕອບໂຕ້ຖ້າຫາກວ່າ ໂປໂລຍ ຈະໃຫ້ອາເມລິກາ ຕິດຕັ້ງລະບົບອາວຸດນິເຄລຍ ໃນໂປໂລຍ ແລະ ບັນດາປະເທດຕາເວັນຕົກ ເປັນຜູ້ເພີ່ມຄວາມສ່ຽງ ໃນການປະເຊີນໜ້າກັນລະຫວ່າງມະຫາອຳນາດດ້ານນິວເຄຼຍ ແລະ ລັດເຊຍໄດ້ປະຕິເສດ ຂໍ້ກ່າວຫາທີ່ທາງສະຫະລັດອາເມລິກາ ກ່າວຫາວ່າ ລັດເຊຍໃຊ້ສານພິດ chloropicrin ຕໍ່ທະຫານຢູເຄຣນ; ລັດເຊຍ ຍຶດໝັ້ນຕໍ່ພັນທະຂອງຕົນພາຍໃຕ້ກົດໝາຍສາກົນກ່ຽວກັບການນຳໃຊ້ອາວຸດເຄມີຕະຫຼອດມາ.

**3) ຂໍ້ຂັດແຍ່ງຢູ່ຕາເວັນອອກກາງ**

ຄວາມຂັດແຍ້ງລະຫວ່າງອິດສະຣາແອນ ແລະ ປາແລັດສະຕິນ ນັບມື້ຂະຫຍາຍເປັນວົງກ້ວາງໄປຫຼາຍປະເທດໃນຕາເວັນອອກກາງ, ໃນນັ້ນວັນທີ 1 ເມສາ 2024, ອິດສະຣາແອນ ໄດ້ໂຈມຕີສະຖານກົງສຸນຂອງອີຣານ ໃນນະຄອນຫຼວງ Damacus ປະເທດຊີຣີ ເຮັດໃຫ້ຜູ້ບັນຊາການອາວຸໂສ ແລະ ພະນັກງານກົງສູນ 7 ຄົນເສຍຊີວິດ ແລະ ປະຊາຊົນຢູ່ບໍລິເວນດັ່ງກ່າວ ເສຍຊີວິດອີກ 4 ຄົນ, ເປັນການທ້າທາຍ ແລະ ລະເມີດອະທິປະໄຕຂອງອີຣານ ແລະ ຊີຣີ ຢ່າງຈະແຈ້ງ ແລະ ອີຣານ ໄດ້ຕອບໂຕ້ ດ້ວຍການໂຈມຕີເປົ້າໝາຍທາງການທະຫານທີ່ສຳຄັນຢູ່ໃນດິນແດນອິດສະຣາແອນ ດ້ວຍລູກສອນໄຟນຳວິຖີ ແລະ ເຮືອບິນບໍ່ມີຄົນຂັບ, ພ້ອມທັງກ່າວວ່າຖ້າອິດສະຣາແອນ ໂຈມຕີ ອີຣານ ອີກ, ຈະພົບກັບການຕອບໂຕ້ຢ່າງບໍ່ຄາດຄິດມາກ່ອນ.  ສ່ວນອິດສະຣາແອນ ສືບຕໍ່ໂຈມຕີເມືອງ ຣາຟາ ໃນແຫຼມກາຊາ ຢ່າງໜັກໜ່ວງ ໂດຍບໍ່ສົນໃຈຕໍ່ການປະນາມຂອງປະຊາຄົມໂລກ. ໃນວັນທີ 1 ເມສາ 2024, ອິດສະຣາແອນ ໄດ້ໂຈມຕີ ເຮືອບັນທຸກເຄື່ອງຊ່ວຍເຫຼືອດ້ານມະນຸດສະທຳຂອງອົງການບໍ່ຫວັງຜົນກຳໄລ (WCK) ທີ່ແລ່ນຜ່ານທະເລເມດີແຕລາເນ ເພື່ອເຂົ້າໄປແຫຼມກາຊາ ເຮັດໃຫ້ມີຜູ້ເສຍຊີວິດ 7 ຄົນ. ສ່ວນກຸ່ມຮູຕີ ໃນເຢເມນ ທີ່ສະໜັບສະໜູນປະຊາຊົນປະແລັດສະຕິນ ໄດ້ຍົກລະດັບການໂຈມຕີບັນດາເຮືອຂອງອິດສະຣາແອນ ແລະ ພັນທະມິດ ໃນທະເລແດງຂະຫຍາຍໄປຮອດອ່າວອາເດນ ແລະ ໃນເຂດມະຫາສະໝຸດອິນເດຍ.    ອາເມລິກາ ຍັງສະໜັບສະໜູນຊ່ວຍເຫຼືອທາງດ້ານອາວຸດ ແລະ ງົບປະມານມະຫາສານແກ່ອິດສະຣາແອນ, ເຮັດໃຫ້ປະຊາຊົນອາເມລິກາບໍ່ພໍໃຈ, ວັນທີ 26 ເມສາ 2024, ຊາວອາເມລິກາ ແລະ ນັກສຶກສາຊຸມນຸມປະທ້ວງທົ່ວສະຫະລັດອາເມລິກາ ໂດຍສະເພາະໃນເຂດມະຫາວິທະຍາໄລ ຫຼັງຈາກ ສ.ອາເມລິກາ ໄຟຂຽວໃຫ້ເງິນຊ່ວຍເຫຼືອອິດສະຣາແອນ. ການປະທ້ວງຍິ່ງຮຸນແຮງ ແລະ ຂະຫຍາຍເປັນວົງກ້ວາງ ຂຶ້ນຫຼັງຈາກມີນັກສຶກສາຖືກຈັບທີ່ມະຫາວິທະຍາໄລໂຄລຳເບຍ ຫຼາຍກວ່າ 100 ຄົນ. ບັນດາມະຫາວິທະຍາໄລໃນອິດສະຣາແອນ ກໍ່ໄດ້ປະທ້ວງຮຽກຮ້ອງ ໃຫ້ນາຍົກລັດຖະມົນຕີອິດສະຣາແອນ ລາອອກຈາກຕຳແໜ່ງນາຍົກລັດຖະມົນຕີ ແລະ ຮຽກຮ້ອງໃຫ້ຈັດການເລືອກຕັ້ງໃໝ່ ແລະ ເລັ່ງຊ່ວຍຕົວປະກັນ 133 ຄົນ ທີ່ຍັງຖືກຄວບຄຸມຕົວໃນກາຊາ ຫຼາຍກວ່າ 6 ເດືອນ. ໃນວັນທີ 18/4/2024, ທີ່ປະຊຸມ ສປຊ ໄດ້ຈັດການລົງຄະແນນເພື່ອຮັບຮອງເອົາ ປາແລັດສະຕິນ ເປັນລັດໜຶ່ງ ໃນຈຳນວນສະມາຊິກສະພາສິດທິມະນຸດ 47 ປະເທດ , ມີ 28 ປະເທດໄດ້ລົງຄະແນນສຽງເຫັນດີ, 6 ປະເທດຄັດຄ້ານລວມທັງອາເມລິກາ, 13 ປະເທດງົດລົງຄະແນນສຽງ. ຈຶ່ງບໍ່ສາມາດຮັບຮອງ ປາແລັດສະຕິນເຂົ້າເປັນສະມາຊິກ ສປຊ ໄດ້.

## II.ການເຄື່ອນໄຫວວຽກງານ ຄະນະນຳ  ຄຕພ.

**1) ຫົວໜ້າ ຄຕພ ຕ້ອນຮັບເອກອັກຄະລັດຖະທູດ ສສ ຫວຽດນາມ ເຂົ້າອວຍພອນປີໃໝ່ລາວ.**



ວັນທີ 04/04/2024,  ສະຫາຍ ທອງສະຫວັນ ພົມວິຫານ,  ກຳມະການສູນກາງພັກ,  ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຫ້ອງການ, ບັນດາກົມຂອງ ຄະນະພົວພັນຕ່າງປະເທດ ສູນກາງພັກ ໄດ້ຕ້ອນຮັບສະຫາຍ ຫງວຽນບ໋າຮຸ່ງ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ພ້ອມດ້ວຍພະນັກງານຂອງສະຖານທູດ ແລະ ບັນດາຫ້ອງການຜູ້ຕາງໜ້າ ສສ ຫວຽດນາມ ປະຈຳ ສປປ  ລາວ ເຂົ້າອວຍພອນປີໃໝ່ລາວ ພສ 2567.  ສອງຝ່າຍ ຍັງໄດ້ປຶກສາ ແລະ ແລກປ່ຽນບາງບັນຫາທີ່ຕ່າງຝ່າຍໃຫ້ຄວາມສົນໃຈ

ແລະ ວຽກງານຈະສືບຕໍ່ປະສານສົມທົບຈັດຕັ້ງປະຕິບັດໃນຕໍ່ໜ້າ; ສອງຝ່າຍ ຢືນຢັນວ່າຈະ ເພີ່ມທະວີການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ຄະນະພົວພັນຕ່າງປະເທດສູນກາງພັກ ແລະ ສະຖານທູດ ເພື່ອປະກອບສ່ວນເຂົ້າໃນການເພີ່ມທະວີສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ໝັ້ນຄົງຕະຫຼອດໄປ. ໃນວັນດຽວກັນ, ຫົວໜ້າ ຄຕພ ຍັງໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ສະຫາຍ ນາງ ທຳມາ ເພັດວິໄຊ, ຮອງປະທານສູນກາງສະຫະພັນແມ່ຍິງລາວ ພ້ອມດ້ວຍຄະນະ ໃນໂອກາດລົງມາຊຸກຍູ້ ວຽກງານສ້າງພະນັກງານນຳພາ-ຄຸ້ມຄອງເພດຍິງ ກໍ່ຄື ວຽກງານການກະກຽມກອງປະຊຸມໃຫຍ່ ແລະ ວຽກງານຮອບດ້ານຂອງສະຫະພັນແມ່ຍິງ ຄຕພ. ຫຼັງຈາກນັ້ນ ຄະນະສະຫະພັນແມ່ຍິງກໍ່ໄດ້ພົບປະເຮັດວຽກກັບ ສະຫາຍ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ.

**2) ຄຕພ ຈັດພິທີປະກາດພະນັກງານ ອອກພັກຜ່ອນຮັບອຸດໜູນ-ບຳນານ.**



ໃນວັນທີ 26 ເມສາ 2024 ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດພິທີປະກາດພະນັກງານຫຼັກແຫຼ່ງຂັ້ນຫົວໜ້າກົມ ເຂົ້າຮັບອຸດໜູນ-ບຳນານ ໂດຍການເຂົ້າຮ່ວມຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ມີບັນດາ ຄະນະພັກ-ຄະນະນຳ, ຄະນະກົມຕະຫຼອດຮອດພະນັກງານຫຼັກແຫ່ງຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ.

ຄະນະຈັດຕັ້ງພິທີໄດ້ຜ່ານ ມະຕິຕົກລົງຂອງ ຄະນະເລຂາທິການສູນກາງພັກ ສະບັບເລກທີ 506/ຄລສພ, ລົງວັນທີ 13/12/2023 ວ່າດ້ວຍການອະນຸມັດໃຫ້ ສະຫາຍ ພົມມາ ສິດເສນາ ຫົວໜ້າກົມ ທີ່ສຳເລັດປະຈຳການໃນຕຳແໜ່ງເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈຳ ສ. ອິນໂດເນເຊຍ ແລະ ສປ. ຕີມໍແລັດສະເຕ ເຂົ້າຮັບອຸດໜູນບຳນານ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

ໃນຕອນທ້າຍ ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ມີຄຳເຫັນວ່າ: ການເຂົ້າຮັບບຳນານແມ່ນການປະຕິບັດນະໂຍບາຍຕໍ່ພະນັກງານທີ່ເຮັດການປະຕິວັດສຸດກົກສຸດປາຍ, ມີຜົນງານຕາມເງື່ອນໄຂທີ່ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນວາງອອກ ແລະ ທັງເປັນກຽດອັນສູງສົ່ງ ໝາຍເຖິງການປະກອບສ່ວນສຳຄັນໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະ 39 ປີ ຂອງ ສະຫາຍ ພົມມາ ສິດເສນາ. ນັ້ນແມ່ນຄວາມເປັນແບບຢ່າງທີ່ພະນັກງານໜຸ່ມນ້ອຍຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ຄວນຖອດຖອນເປັນບົດຮຽນເພື່ອນຳໃຊ້ເຂົ້າໃນໜ້າທີ່ວຽກງານການເມືອງຂອງຕົນໃນສະເພາະໜ້າ ແລະ ຍາວນານ.